# ຫຼັກສູດການຮຽນຮູ້ແບບແນະແນວ

## ຂໍ້ມູນ ສຳລັບນະຄອນທີ່ເນັ້ນໃສ່ການດຳລົງຊີວິດ

ປັດໃຈທີ່ບົດລັອກ ນະຄອນອັດສະລິຍະທີ່ໜ້າຢູ່ ແມ່ນການຄຸ້ມຄອງຂໍ້ມູນ. ນະຄອນສ່ວນໃຫຍ່ໃນປັດຈຸບັນສ້າງຂໍ້ມູນຈຳນວນຫຼວງຫຼາຍ ທີ່ໄດ້ຈາກການສະໜອງບໍລິການ ແລະ ການປະຕິບັດໜ້າທີ່ຂອງນະຄອນ, ເຖິງແນວໃດກໍ່ຕາມ ຂໍ້ມູນນີ້ບໍ່ໄດ້ຖືກພັນຂະຫຍາຍໄປເຂົ້າໄປໃຊ້ໃນການວາງແຜນຜັງເມືອງ ແລະ ການຕັດສິນໃຈ. ຄວາມກັງວົນທີ່ເພີ່ມຂຶ້ນກ່ຽວກັບຄວາມເປັນສ່ວນຕົວ ແລະ ຄວາມປອດໄພຂອງຂໍ້ມູນຍັງກີດຂວາງການນຳໃຊ້ລະບົບດິຈິຕອລ ແລະ ການລວບລວມຂໍ້ມູນ. ອົງການປົກຄອງນະຄອນຈະສາມາດເຮັດຫຍັງໄດ້ແດ່ເພື່ອຮັບປະກັນວ່າຂໍ້ມູນສຳຄັນເຫຼົ່ານີ້ຈະບໍ່ເສຍໄປ? ສາມາດປັບປຸງການຄຸ້ມຄອງຂໍ້ມູນໄດ້ແນວໃດ ແລະ ຈະນຳໄປສູ່ຊີວິດທີ່ດີຂຶ້ນໄດ້ແນວໃດ? ບັນດາຄຳຖາມເຫຼົ່ານີ້ ຈະຖືກນຳສະເໜີ ຢູ່ໃນຫຼັກສູດການຮຽນຮູ້ແບບແນະແນວ (GLP) ຂອງກອງທຶນ **AASCTF.**

## ກຳນົດໝາຍດ້ານວັນເວລາ

- **ເລີ່ມ ການລົງທະບຽນ** — 1 ກໍລະກົດ 2022
- **ມື້ສຸດທ້າຍຂອງການລົງທະບຽນ** — 5 ກໍລະກົດ 2022
- **ຜົນການລົງທະບຽນ** — ຕົ້ນເດືອນສິງຫາ 2022
- **ກອງປະຊຸມ Webinar ຄັ້ງທີ 1** — ສິງຫາ 2022
- **ກອງປະຊຸມ Webinar ຄັ້ງທີ 2** — ກັນຍາ 2022
- **ກອງປະຊຸມ Webinar ຄັ້ງທີ 3** — ພະຈິກ 2022

## ຈຸດສຸມ

**ການເກັບກຳ ແລະ ການຮັກສາຂໍ້ມູນ**
ເປັນຫຍັງຈຶ່ງເກັບຂໍ້ມູນ?
ຈະເກັບຂໍ້ມູນແນວໃດ?
ຂໍ້ມູນໄປໃສແດ່?

**ການຄຸ້ມຄອງ ແລະ ຄວາມປອດໄພຂອງຂໍ້ມູນ**
ຈະຄຸ້ມຄອງຂໍ້ມູນຄືແນວໃດ?
ຈະໃຫ້ມີການເຂົ້າເຖິງຂໍ້ມູນຄືແນວໃດ
ໃນເວລາທີ່ຕ້ອງມີການປົກປ້ອງພົນລະເມືອງ?

**ການວິເຄາະ ແລະ ການຕັດສິນໃຈ**
ວິທີການທົ່ວໄປຂອງການວິເຄາະຂໍ້ມູນທີ່ໄດ້ຮັບ?
ເຮົາຈະມີວິທີການປຸ່ນຂໍ້ມູນໃຫ້ເປັນການ
ປະຕິບັດງານລະອຽດຄືແນວໃດ?

## ໂຄງປະກອບຂອງຫຼັກສູດ

ການເຂົ້າຮ່ວມຫຼັກສູດແມ່ນບໍ່ເສຍຄ່າ. ຫຼັກສູດດັ່ງກ່າວແມ່ນແນໃສ່ພະນັກງານທີ່ກຳລັງເລີ່ມຕົ້ນເຮັດວຽກກ່ຽວກັບການເກັບກຳຂໍ້ມູນຂອງຕົວເມືອງ ແລະ ຈະຮັບຜິດຊອບການວາງແຜນດ້ານຂໍ້ມູນ ຢູ່ພາຍໃນນະຄອນຂອງພວກເຂົາ.

ຫຼັກສູດດັ່ງກ່າວປະກອບດ້ວຍ ກອງປະຊຸມສຳມະນາ webinars ພ້ອມກັບການຄົ້ນຄວ້າ ທີ່ຕ້ອງສຳເລັດໃນລະຫວ່າງກອງປະຊຸມ webinars. ເວລາທີ່ຄາດໄວ້ສຳລັບຫຼັກສູດແມ່ນ 40 ຊົ່ວໂມງ (ລວມທັງ ພາກປະຕິບັດຈາກການສຳມະນາ webinars ແລະ ການຄົ້ນຄວ້າ). ຜົນໄດ້ຮັບຂອງຫຼັກສູດດັ່ງກ່າວຈະເປັນບົດສະເໜີໂຄງການຂໍ້ມູນພື້ນຖານຂອງຕົວເມືອງ ທີ່ບັນດານະຄອນສາມາດຕໍ່ຍອດພັດທະນາໄປຕື່ມ.

**ລົງທະບຽນຢູ່ບ່ອນນີ້**

ASEAN AUSTRALIA SMART CITIES TRUST FUND
Asian Development Bank

Australian Government
Department of Foreign Affairs and Trade

ADB

RAMBOLL